**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

1715

ກະຊວງສຶກສາທິການ ແລະ ກິລາ

ກົມແຜນການ ເລກທີ /ຜກ

ນະຄອນຫຼວງວຽງຈັນ, ວັນທີ ມິຖຸນາ 2026

# ໜັງສືສະເໜີ

**ຮຽນ:** ທ່ານຜູ້ອຳນວຍການສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ

**ເລື່ອງ:** ຂໍປະກາດເຊີນເຂົ້າຮ່ວມການສົມທຽບລາຄາສະໜອງລົດຈັກ 110 ຊີຊີ, ຈຳນວນ 19 ຄັນ ໃຫ້ 19 ເມືອງ ໃນ 10 ແຂວງ ເປົ້າໝາຍໃນການປຸກສ້າງຫ້ອງຮຽນກຸ່ມພັດທະນາເດັກໃນຊຸມຊົນ (Shelter) ພາຍໃຕ້ໂຄງການ ກອງທຶນ ຮ່ວມມືສາກົນເພື່ອການສຶກສາໄລຍະສາມ (GPE III-LEAP), ກະຊວງສຶກສາທິການ ແລະ ກິລາ (Credit No. 6854 - LA)

- ອີງຕາມ ໜັງສືເຊີນເຂົ້າຮ່ວມການສົມທຽບລາຄາການສະໜອງລົດຈັກ 110 ຊີຊີ, ຈຳນວນ 19 ຄັນ ເພື່ອສະໜອງ ໃຫ້ 19 ເມືອງ ໃນ 10 ແຂວງ ເປົ້າໝາຍໃນການປຸກສ້າງຫ້ອງຮຽນກຸ່ມພັດທະນາເດັກໃນຊຸມຊົນ (Shelter)ພາຍໃຕ້ ໂຄງການ (GPE III – LEAP) ສະບັບເລກທີ 1645 /ຜກ ລົງວັນທີ 09 ມິຖຸນາ 2026.

ກົມແຜນການ, ໂຄງການ GPE III - LEAP ມີຈຸດປະສົງຂໍລົງປະກາດເຊີນຜູ້ສົນໃຈສະໜອງ ລົດຈັກ 110 ຊີຊີ, ຈຳນວນ 19 ຄັນ ໃຫ້ 19 ເມືອງ ໃນ 10 ແຂວງ ເປົ້າໝາຍໃນການປຸກສ້າງຫ້ອງຮຽນກຸ່ມພັດທະນາເດັກໃນຊຸມຊົນ (Shelter) ພາຍໃຕ້ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ (GPE III-LEAP. ສະນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ຊ່ວຍລົງປະກາດທາງເວບໄຊ ຂອງກະຊວງສຶກສາທິການ ແລະ ກິລາ ໃນວັນທີ 09 – 24 ມິຖຸນາ 2026, ດັ່ງລາຍລະອຽດໄດ້ຄັດຕິດເອກະສານປະກາດມາພ້ອມນີ້ (1 ສະບັບ) ຜູ້ທີ່ສົນໃຈ ສາມາດຕິດຕໍ່ພົວພັນໄດ້ທີ່:

ຫ້ອງການປະສານງານສາກົນເພື່ອການສຶກສາ (ECU), ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ
ໂທ: +856 21 243672 ຫລື 020 5582 6153
e-mail: ecudp.laopdr@gmail.com

ດັ່ງນັ້ນ, ຈຶ່ງຂໍຮຽນສະເໜີມາຍັງທ່ານເພື່ອພິຈາລະນາ ແລະ ດຳເນີນການຕາມທາງຄວນດ້ວຍ.

**ຮອງຫົວໜ້າກົມ**

ຫົວໜ້າຄະນະຮັບຜິດຊອບໂຄງການ

ອະນຸແພງ ແກ້ວວົງສາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ກົມແຜນການ

ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ ເລກທີ: 16 4 5 /ຜກ

ນະຄອນຫລວງວຽງຈັນ, ວັນທີ: 09 ມິຖຸນາ 2026

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ: ______________________________

1. ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ ໄດ້ຮັບທຶນຊ່ວຍເຫຼືອລ້າ ຈາກໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສອງ (GPE III) ພາຍໃຕ້ການຄຸ້ມຄອງຂອງທະນາຄານໂລກ ເພື່ອດຳເນີນການສົມທຽບລາຄາການຈັດຊື້ລົດຈັກ 110 ຊີຊີ, ຈຳນວນ 19 ຄັນ ເພື່ອສະໜອງໃຫ້ 19 ເມືອງ ໃນ 10 ແຂວງ ເປົ້າໝາຍໃນການປຸກສ້າງຫ້ອງຮຽນກຸ່ມພັດທະນາເດັກໃນຊຸມຊົນ (Shelter), ພາຍໃຕ້ໂຄງການ GPE III-LEAP.
2. ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ GPE III ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງສົມທຽບລາຄາການຈັດຊື້ລົດຈັກ 110 ຊີຊີ ຈຳນວນ 19 ຄັນໄລຍະເວລາໃນການສົ່ງມອບແມ່ນ 45 ວັນ (ພາຍຫຼັງເຊັນສັນຍາ).
3. ການສົມທຽບລາຄານີ້ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນຳເພີ່ມເຕີມສຳລັບມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທີ 24 ມິຖຸນາ 2019. ບໍລິສັດ ຫຼື ຫ້າງຮ້ານສົນໃຈເຊີນຕິດຕໍ່ເອົາຊອງສົມທຽບລາຄາ ນັບແຕ່ວັນທີ 09 – 24 ມິຖຸນາ 2026 ຕາມເວລາໂມງລັດຖະການ.
4. ຊອງສະເໜີລາຄາຈະຕ້ອງສົ່ງກ່ອນ ເວລາ 14:50 ໂມງ ຂອງວັນທີ 24 ມິຖຸນາ 2026 ແລະ ຊອງສະເໜີລາຄາທຸກໆຊອງຈະໄດ້ເປີດໃນເວລາ 15:00 ໂມງ ຂອງມື້ດຽວກັນ ໂດຍຊ່ອງໜ້າຄະນະກຳມະການ ແລະ ຜູ້ທີ່ຍື່ນຊອງຕາງໜ້າບໍລິສັດທີ່ສົນໃຈຢາກເຂົ້າຮ່ວມ ທີ່ຫ້ອງປະຊຸມຫ້ອງການປະສານງານສາກົນເພື່ອການສຶກສາ (ECU), ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ. ສະຖານ ທີ່ ຖະໜົນລ້ານຊ້າງ, ຕຶກຫຼັງໃໝ່ ຊັ້ນ 1, ຕູ້ ປນ. 067, ໂທ/ແຟັກ: (+86521) 243672; ອີເມວ: e-mail: ecudp.laopdr@gmail.com

ຮອງຫົວໜ້າກົມ

ຫົວໜ້າຄະນະຮັບຜິດຊອບໂຄງການ

ຂະນຸແພງ ແກ້ວວົງສາ